ເງື່ອນໄຂຮັບເອົາການສະລະສິດ

ຜູ້ຮັບການຊ່ວຍເຫລືອຕ້ອງໄດ້ສອດຄ່ອງນຳກົດໝາຍຕໍ່ລົງໄປນີ້ທຸກໆຢ່າງ:

- ເປັນລູກຄ້າຜູ້ທີ່ມີເງື່ອນໄຂໄດ້ຮັບຂອງຜະແນກDDAໂດຍອີງຕາມRCW 71A.10.020(5).
- ມີຄວາມເສັຍອົງຄະໂດຍອີງຕາມກົດໝາຍທີ່ຖືກກໍ່ຕັ້ງໄວ້ແລ້ວຢູ່ໃນກົດຫມາຍ Social Security Act.
- ຮ້ອງຂໍເອົາການບໍຣິການປິ່ນປົວຣະຍະຍາວ/Medicaid ແລະມີຣາຍໄດ້ທີ່ພີສູດໄດ້ຊຶ່ງບໍ່ຫາຍເກີນ 300% ຂອງມາດຕະຖານການຊ່ວຍເຫລືອເງິນ SSI ຂອງຣັດຖະບານກາງ.
  - ຖ້າຫາກว่าເປັນດັກນ້ອຍ,ຣາຍໄດ້ແລະຊັບສິນຂອງພໍ່ແມ່ຈະບໍ່ຖືກພິຈາຣະນາຄິດໄລ່ໃສ່
  - ຖ້າຫາກว่าເປັນຜູ້ໃຫຍ່ອາສັຍຢູ່ນຳຄູ່ຜົວເມັຽ,ຣາຍໄດ້ແລະຊັບສິນຂອງຄູ່ຜົວເມັຽຈະບໍ່ຖືກພິຈາຣະນາຄິດໄລ່ໃສ່.
- ມີຊັບສິນຕ່ຳກວ່າ$2,000 ຫລືຢູ່ໃນໂຄງການ Apple Health for Workers with Disabilities (HWD).
- ສອດຄ່ອງນຳຣະດັບຂອງການປິ່ນປົວທີ່ຖືກເອົາໃຫ້ຢູ່ໃນສະຖາບັນການປິ່ນປົວປານກາງສຳລັບບຸກຄົນທີ່ມີຄວາມເສັຍອົງຄະດ້ານປັນຍາແນວຄິດ(ICF/IID) ຕາມທີ່ຖືກຖືກພິຈາຣະນາເຫັນໂດຍການປະເມີນຜົນຂອງຜະແນກDDA.
- ແຜນການບໍຣິການລວມສູນໃສ່ບຸກຄົນ(PCSP) ສະແດງໃຫ້ເຫັນว่าຄວາມຕ້ອງການດ້ານອະນາໄມ,ຄວາມປອດພັຍ,ແລະການຝຶກຝົນໃຫ້ດີຄົນສາມາດຖືກຕອບສະນອງໄດ້ແນວໃດຢູ່ຕາມຊຸມນຸມຊົນທີ່ມີການບໍຣິການສະລະສິດແລະ/ຫລືການຄວບຄຸມເບິ່ງນຳປະຈຳເດືອນ.
- ຕົກລົງເຫັນພ້ອມທີ່ຈະຮັບເອົາການບໍຣິການອີງໃສ່ເຮືອນແລະຊຸມນຸມຊົນແທນທີ່ວ່າຈະແມ່ນ ICF/IID.
- ສຳລັບ CIIBS ເທົ່ານັ້ນ,ບຸກຄົນນັ້ນຍັງຈະຕ້ອງ:
  - ມີອາຍຸ18 ປີໄປເຖິງ 17 ປີສຳລັບການຈົດຊື່ເບື້ອງຕົ້ນ (ຮັບໃຊ້ໄປເຖິງອາຍຸ 20 ປີ) ;
  - ຖືກປະເມີນຜົນໃນເບື້ອງຕົ້ນว่าຢູ່ໃນການສ່ຽງຕໍ່ການຈັດຫາໃຫ້ຢູ່ນອກເຮືອນສູງແລະຮ້ຍແຮງຍ້ອນການປະພຶດທີ່ມີບັນຫາ;ແລະ;
  - ອາສັຍຢູ່ນຳຄອບຄົວຜູ້ທີ່ເຫັນຕົກລົງທີ່ຈະເຂົ້າຮ່ວມໃນໂຄງການCIIBS.

ການເຂົ້າເຖິງ Waiver

ຄຳຮ້ອງຂໍເອົາການຈົດຊື່ເຂົ້ານຳ,ຫລືເພື່ອຈະປ່ຽນໄປເປັນການສະລະສິດຢ່າງອື່ນສາມາດຖືກເຮັດໄດ້ໃນທຸກໆເວລາ.ສອບຖາມນຳຜູ້ຈັດການຊ່ວຍເຫລືອກໍຣະນີ (CRM). ຖ້າຫາກว่า CRM ບໍ່ມີເວລາว่างໃຫ້ສົ່ງຄວາມໄວ້ນຳສາຍໂທຣະສັບບໍ່ຈ່າຍເງິນຫ້ອງຖົ່ນທີ່ຖືກກ່າວຢູ່ພາຍໃຕ້ຫ້ອງການຫ້ອງຖົ່ນຫລືຍື່ນຄຳຮ້ອງຂໍທາງອອນລາຍນີ້ໄດ້ທີ່ **www.dshs.wa.gov/dda/service-and-information-request.** ການສອດຄ່ອງນຳກົດໝາຍການບໍຣິການສຳລັບການສະລະສິດບໍ່ໄດ້ຮັບປະກັນການເຂົ້າເຖິງການບໍຣິການ.ການສະລະສິດແຕ່ລະຢ່າງມີຂອບເຂດໃນຈຳນວນຂອງຄົນຜູ້ທີ່ສາມາດຖືກຮັບໃຊ້.ຈົ່ງຈື່ກະມີສິດອຳນາດທີ່ຈະຕັ້ງຂອບເຂດການຈົດຊື່ເຂົ້າໃສ່ອີງຕາມການມີໄວ້ໃຫ້ໃຊ້ໃນເງິນທຶນສຳລັບຜູ້ເຂົ້າຮ່ວມນຳການສະລະສິດຄົນໃຫມ່.

ສິດທິການຟັງເຣື່ອງຈາກອຳນາດການປົກຄອງ

ທຸກໆຄົນມີສິດໃນການຟັງເຣື່ອງຈາກອຳນາດການປົກຄອງນຳການຕັດສິນຕໍ່ລົງໄປນີ້ແນວໃດແນວນຶ່ງໂດຍບໍ່ກ່ຽວນຳໂຄງການຫລືການບໍຣິການ:

- ເງື່ອນໄຂຮັບເອົາຂອງຜະແນກ DDA ໄດ້ຖືກປະຕິເສດ,ຕັດຫລືຜະແນກ DDA ໄດ້ຖ່ວງດຶງຢ່າງບໍ່ມີເຫດຜົນໃນການປະຕິບັດການໃສ່ຄຳຮ້ອງຂໍ;ຫລື
- ຂະນິດຫລືຈຳນວນຂອງການບໍຣິການທີ່ຖືກອະນຸຍາດໃຫ້ໄດ້ຮັບ;ຫລື
- ການປະຕິເສດ,ການລຸດລົງ,ຫລືການຕັດການບໍຣິການ;ຫລື
- ການປະຕິເສດການເລືອກເອົາທ່ານຫມໍໃຫ້ການບໍຣິການ;ຫລື
- ຖ້າຫາກว่าໄດ້ຍ້າຍໄປຢູ່ສະຖານທີ່ອາສັຍຢູ່ບ່ອນອື່ນ,ທີ່ບໍ່ແມ່ນບ່ອນເລືອກເອົາຂອງຄົນໃດຄົນນຶ່ງ;ຫລື
- ການປະຕິເສດຂອງຜະແນກ DDAທີ່ຈະເຮັດຕາມຄຳຮ້ອງຂໍບໍ່ໃຫ້ສິ່ງໃບແຈ້ງການໄປຫາຄົນອື່ນຄົນໃດຄົນນຶ່ງ;ຫລື
- ການເຊົາຈົດຊື່ຈາກໂຄງການສະລະສິດ;ຫລື
- ການປະຕິເສດໃນຄຳຮ້ອງຂໍທີ່ຈະຮັບເອົາການບໍຣິການ ICF/IID ແທນທີ່ວ່າຈະແມ່ນການບໍຣິການສະລະສິດ;ຫລື
- ຜະແນກ DDA ພົບເຫັນว่าການບໍຣິການທີ່ມີໄວ້ໃຫ້ໃນການສະລະສິດປັດຈຸບັນສາມາດຕອບສະນອງຄວາມຕ້ອງການດ້ານສຸຂະພາບແລະຄວາມຢູ່ດີມີແຮງແລະບຸກຄົນບໍ່ເຫັນພ້ອມນຳ;ຫລື
- ຄົນໃດຄົນນຶ່ງໄດ້ຖືກຕີຣາຄາປະເມີນຜົນว่าບໍ່ຕ້ອງການລະດັບການປິ່ນປົວ ICF/IID; ຫລື
- ບຸກຄົນໄດ້ຖືກຕີຣາຄາປະເມີນຜົນว่าບໍ່ສອດຄ່ອງນຳເງື່ອນໄຂຮັບເອົາຂອງ CIIBS.

ແວ່ເຂົ້າຢັ້ຢມພວກເຮົາທາງອອນລາຍນີ້ໄດ້ທີ່:
dshs.wa.gov/dda/service-and-information-request

ຊອກຫາຫ້ອງການໄດ້ທີ່:
dshs.wa.gov/DDA/dda/find-an-office

ໂທຫາພວກເຮົາ:

ລາວຕີ	ໂທຣະສັບແລະອີເມລ์
Chelan, Douglas, Ferry, Grant, Lincoln, Okanogan, Pend Oreille, Spokane, Stevens	(800) 319-7116 R1ServiceRequestA@dshs.wa.gov
Adams, Asotin, Benton, Columbia, Franklin, Garfield, Kittitas, Klickitat, Walla Walla, Whitman, Yakima	(866) 715-3646 R1ServiceRequestB@dshs.wa.gov
Island, San Juan, Skagit, Snohomish, Whatcom	(800) 567-5582 R2ServiceRequestA@dshs.wa.gov
King	(800) 974-4428 R2ServiceRequestB@dshs.wa.gov
Kitsap, Pierce	(800) 735-6740 R3ServiceRequestA@dshs.wa.gov
Clallam, Clark, Cowlitz, Grays Harbor, Jefferson, Lewis, Mason, Pacific, Skamania, Thurston, Wahkiakum	(888) 707-1202 R3ServiceRequestB@dshs.wa.gov

ບຸກຄົນຜູ້ທີ່ຕ້ອງການການຊ່ວຍເຫລືອນຳການຟັງສຽງຫລືການຕິດຕໍ່ສື່ສານສາມາດໂທຫາຜະແນກ Washington Telecommunication Relay Service ໂດຍການບີບຫາເລກ7-1-1 ຫລື1-800-833-6388 (TTY)..

Washington State Department of Social & Health Services

ການປ່ຽນແປງຊີວິດ

DSHS 22-1755 LA (3/18) Laotian

ໂຄງການ Children's Intensive In-Home Behavioral Support Waiver

ຈາກຜະແນກ
Developmental Disabilities Administration

Washington State Department of Social & Health Services

ການປ່ຽນແປງຊີວິດ

ການຂັນຂະຍາຍໂດຍສະລູບກ່ຽວກັບWaiver

ກົມ Department of Social and Health Service's Developmental Disabilities Administration (DDA) ມີໂຄງການHome and Community-Based Service (HCBS) Medicaid Waiver ຫ້າໂຄງການ.ການສະລະສິດແຕ່ລະໂຄງການສະເນີໃຫ້ມີການບໍຣິການອັນເຈາະຈົງເພື່ອຈະຕອບສະນອງຄວາມຕ້ອງການທາງດ້ານອະນາໄມແລະຄວາມປອດໄພຢູ່ໃນອຸມມຸນອິນ.ໂຄງການChildren's Intensive In-Home Behavioral Support (CIIBS) waiver ສະເນີໃຫ້ມີການບໍຣິການຫລາຍໆຢ່າງເມື່ອເວລາບໍ່ມີໄວ້ໃຫ້ຜ່ານແຫລ່ງຊ່ວຍເຫລືອອື່ນໆ (ປະກັນພັຍເອກອິນ, Medicaid, ໂຮງຮຽນ,ອື່ນໆ.)

ໂຄງການ Children's Intensive In-Home Behavioral Support (CIIBS) waiver ຊຸ້ມຊູຊາວຫນຸ່ມຜູ້ທີ່ສ່ຽງຕໍ່ການຈັດໃຫ້ຢູ່ນອກເຮືອນຍ້ອນການປະພຶດທີ່ເປັນບັນຫາ.ໂຄງຮ່າງCIIBS ກ່ຽວພັນນຳການວາງແຜນຮອບດ້ານແລະການຊຸ້ມຊູການປະພຶດດີມຸ່ງໃສ່ຄອບຄົວ.ໂຄງການ CIIBS waiver ຮັບໃຊ້ເດັກນ້ອຍອາຍຸ 8 ປີຫາ20 ປີ.

ຖ້າຫາກว่าຄວາມຕ້ອງການສຳລັບການບໍຣິການທີ່ຖືກຕີຣາຄາປະເມີນຜົນເບິ່ງແລ້ວກາຍເກີນຂອບເຂດຂອງການບໍຣິການທີ່ຖືກເອົາໃຫ້ພາຍໃຕ້ໂຄງການ CIIBS waiver, ພະແນກ DDA ຈະທຳຄວາມພະຍາຍາມຕໍ່ລິງໄປນີ້ອີກເທື່ອນຶ່ງຫລືຫລາຍເທື່ອເພື່ອຈະຕອບສະນອງຄວາມຕ້ອງການທາງດ້ານສຸຂະພາບແລະຄວາມຢູ່ດີມີແຮງ.

- ຊີ້ບອກການຊຸ້ມຊູຕາມທັມມະຊາດທີ່ມີໄວ້ໃຫ້ເຕັ່ມອີກ;
- ເລີ້ມຕົ້ນເຮັດການຍົກເວັ້ນຕໍ່ກົດລະບຽບເພື່ອຈະສົ່ງອອກມາເຮື່ອງການເຂົ້າເຖິງການບໍຣິການທີ່ບໍ່ແມ່ນສະລະສິດທີ່ມີຢູ່ບໍ່ໃຫ້ລວມຢູ່ໃນໂຄງການສະລະສິດ CIIBS waiver ນອກຈາກການຊຸ້ມຊູຕາມທັມມະຊາດ;
- ໃຫ້ໂອກາດທີ່ຈະຮ້ອງຂໍເອົາການສະລະສິດທາງອື່ນທີ່ມີການບໍຣິການທີ່ຕ້ອງການ;
- ສະເນີການຈັດໃຫ້ຢູ່ໃນສະຖານັນການປິ່ນປົວປານກາງສຳລັບບຸກຄົນຜູ້ທີ່ມີຄວາມຊັ່ຍອິງຄະດ້ານສະຕິປັນຍາ(ICF/IID).

ຖ້າຫາກว่าບໍ່ມີທາງເລືອກເອົາຢູ່ຂ້າງເທິງນີ້ຈັກຢ່າງຕອບສະນອງຄວາມຕ້ອງການທາງດ້ານສຸຂະພາບແລະຄວາມຢູ່ດີມີແຮງ,ພະແນກ DDA ຈະຕັດເງື່ອນໄຂໄດ້ຮັບການສະລະສິດ.ຖ້າຫາກว่าຖືກຕັດຈາກການສະລະສິດແລ້ວ,ຄົນນັ້ນອາດຈະບັງມີເງື່ອນໄຂໄດ້ຮັບຢູ່ການບໍຣິການບໍ່ສະລະສິດຂອງພະແນກDDA.

ການບໍຣິການຂອງ Waiver

ຈົ່ງໃຊ້ປຶ້ມຄູ່ມືຫົວນີ້ເພື່ອຈະວາງແຜນສຳລັບການຕີຣາຄາປະເມີນຜົນປະຈຳປີ. Case resource manager (CRM) ຈະອະທິບາຍເຖິງການບໍຣິການແລະກົດກຳນົດ,ແລະບັນທຶກການບໍຣິການທີ່ຖືກເລືອກເອົາຢູ່ໃນແຜນການ Person-centered service plan (PCSP). ການບໍຣິການບາງຢ່າງຕ້ອງມີການກວດເບິ່ງຄືນແລະການອະນຸມັດກ່ອນທີ່ມັນຈະຖືກເອົາໃຫ້. ສອບຖາມນຳCRMກ່ຽວກັບว่ารายระอะถูกแนวใดแถ่ที่ต้องการสำลับการอะนุมัถล่วงหน้า.ການບໍຣິການຢູ່ໃນສີ່ຂະແນງລວມເອົາ:

- **ການບໍຣິການຕາມຂຸມນຸມອິນ**–ສິ່ງເສີມການເຂົ້າຮ່ວມຂອງລູກຄ້າແລະການປັບຕົວເຂົ້ານຳຂຸມນຸມອິນ
- **ການບໍຣິການຂອງນັກວິຊາການ**–ການບໍຣິການຊຸ້ມຊູທີ່ຖືກເອົາໃຫ້ໂດຍນັກວິຊາການທີ່ມີສັນຍາ
- **ການບໍຣິການໃຫ້ການເບິ່ງແຍງດູແລ**–ການຊຸ້ມຊູສຳລັບຜູ້ເຂົ້າຮ່ວມແລະຜູ້ໃຫ້ການເບິ່ງແຍງດູແລຂອງເຂົາເຈົ້າ
- **ຜະລິດຫະພັນແລະການບໍຣິການ**–ອຸບປະກອນ,ເຄື່ອງໃຊ້ສອຍແລະການບໍຣິການພິເສດສຳລັບຜູ້ເຂົ້າຮ່ວມນຳ

ໃຊ້ບອກ້ຫມາຍໃສ່ເພື່ອຈະສະແດງໃຫ້CRM ຕັນວ່າການບໍຣິການແນວໃດແດ່ທີ່ສົນໃຈ:

ການບໍຣິການຕາມຂຸມນຸມອິນ

☐ **ການອິນສິ່ງໄປມາ**–ການໃຊ້ເງິນຄືນໃຫ້ຜູ້ໃຫ້ການບໍຣິການສຳລັບການອິນສິ່ງໄປມາທີ່ບໍ່ແມ່ນການພະຍາບານທີ່ຕ້ອງການເພື່ອຈະເຂົ້າຫາການບໍຣິການສະລະສິດທີ່ຖືກກຳວດເຈາະຈົງຢູ່ໃນPCSP.

ການບໍຣິການຂອງນັກວິຊາການ

☐ **ການບໍຣິການເຮັດໃຫ້ສຸຂະພາບການປະພຶດໃຫ້ຫຸ່ນທ່ຽງ**–ການບໍຣິການເພື່ອຈະຊ່ວຍເຫລືອແລະຊຸ້ມຊູໃນຮະຫວ່າງພາວະເຄັດຄ້ອນສຸຂະພາບການປະພຶດ.ອັນນີ້ລວມເອົາການຊຸ້ມຊູແລະການປຶກສາການປະພຶດທີ່ດີ,ແລະການປິ່ນປົວນອນໂຮງຫມໍໃນພາວະເຄັດຄ້ອນ.

☐ **ການບໍຣິການປິ່ນປົວສຸຂະພາບໂຮກຈິດໃຫ້ຫຸ່ນທ່ຽງ**–ການປິ່ນປົວນອນໂຮງຫມໍໃນພາວະເຄັດຄ້ອນ–ການບໍຣິການປິ່ນປົວຢູ່ຕາມເຮືອນແລະການປະພຶດຄຸ່ວຄາວສຳລັບຜູ້ທີ່ຕົກຢູ່ໃນການສ່ຽງອັນຕະຣາຍຮ້າຍແຮງຄືງໄປໃນການທຳງານທາງຈິດໃຈແລະຢູ່ໃນການສ່ຽງອັນຕະຣາຍຂອງການນອນໂຮງຫມໍໂຮກຈິດ.

☐ **ການຊຸ້ມຊູການປະພຶດໃຫ້ໄປໃນທາງດີແລະການປຶກສາ**–ການຊຸ້ມຊູທີ່ແກ້ໄຂຄວາມຕ້ອງການທາງສຸຂະພາບການປະພຶດ.ສິ່ງເຫລົ່ານີ້ລວມເອົາການເຂົ້າແຊກແຊງໂດຍກົງເພື່ອຈະສິ່ງເສີມການປະພຶດຊຶ່ງຈະເຮັດໃຫ້ຄຸນນະພາບຂອງຊີວິດໃຫ້ດີຂຶ້ນແລະການເຂົ້າໃນອຸມມຸນອິນ.

☐ **ການຕີຣາຄາປະເມີນຜົນເບິ່ງການສ່ຽງອັນຕະຣາຍ**–ການຕີຣາຄາປະເມີນຜົນເບິ່ງການປະພຶດຮຸນແຮງ,ເຝົ້າຣິບກວນ,ອາຣົມທາງເພດ,ຫລືນຳລ່າເພື່ອຈະພິຈາຣະນາເບິ່ງຄວາມຕ້ອງການໃນການບໍຣິການທາງໂຮກຈິດ,ພະຍາບານຫລືການບຳບັດ.

☐ **ການປຶກສາແລະການຝຶກຝົນສຳລັບພະນັກງານ/ຄອບຄົວ**–ການຝຶກຝົນແລະການປຶກສາແບບວິຊາການໃຫ້ແກ່ຄອບຄົວແລະຊີ້ນຳໃຫ້ຜູ້ໃຫ້ການບໍຣິການໂດຍກົງເພື່ອຈະຕອບສະນອງຄວາມຕ້ອງການໃຫ້ດີຂຶ້ນກว่าເກົ່າ. ການປຶກສາກໍ່ມີໄວ້ໃຫ້.

ການບໍຣິການໃຫ້ການເບິ່ງແຍງດູແລ

☐ **ການປຸດພັກຍົ່ວຄາວ**–ການຜ່ອນຄາຍຣະຍະສັ້ນໃຫ້ແກ່ບຸກຄົນຜູ້ທີ່ອາສັຍຢູ່ນຳແລະເບິ່ງແຍງດູແລລູກຄ້າ.

ຜະລິດຫະພັນແລະການບໍຣິການ

☐ **ເຫັກໂນໂລຈີຊ່ວຍເຫລືອ**-ຜະລິດຫະພັນແລະການຝຶກຝົນທີ່ຖືກໃຊ້ເພື່ອຈະສິ່ງເສີມຫລືຮັກສາຄວາມສາມາດໃນການທຳງານ.

☐ **ການປັບຕົວໃຫ້ເຂົ້າກັບສະພາບແວດລ້ອມ**–ການດັດແປງທາງຮູບຮ່າງໃສ່ເຮືອນທີ່ຈຳເປັນສຳລັບບຸກຄົນທີ່ຈະດຳເນີນການດຳຣົງຊີວິດຢູ່ໃນອຸມມຸນອິນ.

☐ **ເຄື່ອງນຸ່ງພິເສດ**-ເຄື່ອງນຸ່ງບໍ່ຈຳກັດທີ່ຖືກດັດແປງໃສ່ຄວາມຕ້ອງການທີ່ກ່ຽວພັນນຳຄວາມຊັ່ຍອິງຄະ.

☐ **ອຸບປະກອນພະຍາບານພິເສດແລະເຄື່ອງໃຊ້ສອຍ**–ອຸບປະກອນແລະເຄື່ອງໃຊ້ສອຍທີ່ຈຳເປັນທາງດ້ານການພະຍາບານທີ່ບໍ່ມີໄວ້ໃຫ້ພາຍໃຕ້ໂຄງການ Medicaid (Apple Care).

☐ **ອຸບປະກອນແລະເຄື່ອງໃຊ້ສອຍບຳບັດຮັກສາ**-ເຄື່ອງໃຊ້ສອຍທີ່ຕ້ອງການເພື່ອຈະວາງໃຊ້ແຜນການຊຸ້ມຊູການບຳບັດຮັກສາຫລືການປະພຶດດີ.

☐ **ການດັດແປງຍານພາຫານະ**-ການດັດແປງໃຫ້ເຫມາະສົມໃສ່ຍານພາຫານະຊຶ່ງອຳນວຍຄວາມສະດວກຄວາມຕ້ອງການຂອງທ່ານແລະຊຸ້ມຊູການລວມເຂົ້ານຳຂຸມນຸມອິນ.